**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ບົດບັນທຶກ

## ກອງປະຊຸມທຸລະກິດລາວ ຄັ້ງທີ 15
## ວັນທີ 02 ເມສາ 2024

ກອງປະຊຸມທຸລະກິດລາວ ຄັ້ງທີ 15 ໄດ້ຖືກຈັດຂຶ້ນ ໃນວັນທີ 02 ເມສາ 2024, ເວລາ 08:00 ໂມງ ທີ່ຫໍປະຊຸມແຫ່ງຊາດ, ພາຍໃຕ້ການເປັນປະທານ ຂອງ **ທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ** ແລະ ເຂົ້າຮ່ວມໂດຍຄະນະຊີ້ນຳກອງປະຊຸມທຸລະກິດລາວ ນຳໂດຍ ທ່ານ ມະໄລທອງ ກົມມະສິດ, ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ (ກະຊວງ ອຄ), ທ່ານ ອຸເດດ ສຸວັນນະວົງ, ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ), ຜູ້ຕາງໜ້າ ຈາກຂະແໜງການກ່ຽວຂ້ອງຂອງພາກລັດ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ, ທູຕານຸທູດ, ຜູ້ຕາງໜ້າຈາກ ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນປະຈຳລາວ, ບັນດາຜູ້ຕາງໜ້າຈາກ ສະມາຄົມ, ກຸ່ມ ແລະ ຫົວໜ່ວຍທຸລະກິດ, ກອງເລຂາ ແລະ ຈຸດປະສານງານພາກລັດ ຂອງກອງປະຊຸມທຸລະກິດລາວ ແລະ ບັນດາສຳນັກຂ່າວ ເຂົ້າຮ່ວມທັງໝົດປະມານ 450 ທ່ານ.

### I. ຈຸດປະສົງ

ເພື່ອສະຫລຸບຕີລາຄາ ຄວາມຄືບໜ້າຂອງການແກ້ໄຂບັນຫາ ທີ່ກະທົບຕໍ່ ການສ້າງຕັ້ງ, ເຄື່ອນໄຫວ ແລະ ການຂະຫຍາຍທຸລະກິດ ພ້ອມທັງ ກຳນົດບູລິມະສິດ ແລະ ທິດທາງແກ້ໄຂບັນຫາ ທີ່ຍັງຄົງຄ້າງ.

### II. ການດຳເນີນກອງປະຊຸມ

**ທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ**, ປະທານກອງປະຊຸມ, ໄດ້ກ່າວເປີດ ແລະ ໄດ້ເນັ້ນໜັກເຖິງຄວາມສຳຄັນ ຂອງການພັດທະນາຂະແໜງການບໍລິການ ແລະ ການຜະລິດເພື່ອສົ່ງອອກ ຜ່ານການປັບປຸງລະບົບການຂົນສົ່ງ, ໂລຈິສຕິກ, ແລະ ຂັ້ນຕອນການນຳເຂົ້າ ແລະ ສົ່ງອອກ ເພື່ອເຊື່ອມຈອດກັບຕະຫຼາດພາກພື້ນ, ຫຼຸດຜ່ອນຕົ້ນທຶນການດຳເນີນທຸລະກິດ ແລະ ແກ້ໄຂບັນຫາການຂາດແຄນແຮງງານ. ທ່ານ ນາຍົກລັດຖະມົນຕີ ຍັງໄດ້ຕີລາຄາສູງ ຕໍ່ການຈັດຕັ້ງປະຕິບັດກົນໄກປຶກສາຫາລືຂອງກອງປະຊຸມທຸລະກິດລາວ ໃນໄລຍະຜ່ານມາ ເຊິ່ງໄດ້ມີການປະກອບສ່ວນທີ່ສຳຄັນຕໍ່ການແກ້ໄຂ ສິ່ງທ້າທາຍ ແລະ ອຸປະສັກໃນການສ້າງຕັ້ງ ແລະ ດຳເນີນທຸລະກິດ ແລະ ໄດ້ຮຽກຮ້ອງໃຫ້ ທຸລະກິດ ພາຍໃນ ແລະ ຕ່າງປະເທດ ລວມເຖິງ ຂະແໜງການພາກລັດ ນຳໃຊ້ກົນໄກປຶກສາຫາລື ລະຫວ່າງ ພາກລັດ ແລະ ທຸລະກິດ ຕາມຂໍ້ຕົກລົງເລກທີ 04/ນຍ ວ່າດ້ວຍກົນໄກປຶກສາຫາລື ພາຍໃຕ້ກອງປະຊຸມທຸລະກິດລາວ ເພື່ອແກ້ໄຂບັນຫາ ທີ່ເປັນສິ່ງກີດໜ່ວງດ້ານການຄ້າ ແລະ ການລົງທຶນ.

### III. ເນື້ອໃນກອງປະຊຸມ

ກອງປະຊຸມໄດ້ຮັບຟັງການລາຍງານຕາມວາລະລຸ່ມນີ້:

1. ການນຳສະເໜີກ່ຽວກັບການຈັດຕັ້ງປະຕິບັດວຽກງານຈຸດສຸມ ຂອງ ສຄອຊ

ທ່ານ ອຸເດດ ສຸວັນນະວົງ, ປະທານ ສຄອຊ, ໄດ້ລາຍງານຕໍ່ກອງປະຊຸມ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານຈຸດສຸມ ເພື່ອປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດ ເຊິ່ງສາມາດສະຫຼຸບໄດ້ດັ່ງນີ້:

- ເລີ່ມແຕ່ກອງປະຊຸມທຸລະກິດລາວ ຄັ້ງທີ 10 (ປີ 2017) ເປັນຕົ້ນມາ, ຂະບວນການປຶກສາຫາລືຂອງກອງປະຊຸມທຸລະກິດລາວ ໄດ້ແກ້ໄຂບັນຫາສຳຄັນຫຼາຍກວ່າ 30 ຂໍ້ສະເໜີ ທີ່ຕິດພັນກັບການປັບປຸງການເຂົ້າເຖິງແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ, ປັບປຸງຂອດຂັ້ນການເລີ່ມຕົ້ນທຸລະກິດ, ມາດຕະການອຳນວຍຄວາມສະດວກດ້ານການຄ້າ ແລະ ການສົ່ງເສີມໃຫ້ມີການເປີດກວ້າງການລົງທຶນ;
- ສຄອຊ ຮ່ວມກັບກະຊວງ ອຄ ຍັງໄດ້ມີການເຄື່ອນໄຫວ ກົນໄກການປຶກສາຫາລື ລະຫວ່າງພາກລັດ ແລະ ພາກທຸລະກິດ ຂັ້ນແຂວງ (LPPD), ແລະ ມີໂຄງການ ການພັດທະນາດັດສະນີການສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ (ProFIT) ທີ່ມີຈຸດປະສົງເພື່ອເກັບກຳຂໍ້ມູນນຳພາກທຸລະກິດ ທີ່ເຄື່ອນໄຫວລະດັບທ້ອງຖິ່ນ ຕໍ່ການບໍລິຫານ ແລະ ການບໍລິການຂອງພາກລັດ ຢູ່ໃນແຂວງຕ່າງໆ;
- ປະທານ ສຄອຊ ກ່າວຊົມເຊີຍ ທ່ານນາຍົກລັດຖະມົນຕີ ແລະ ຄະນະລັດຖະບານ ທີ່ໄດ້ອອກຂໍ້ຕົກລົງ ສະບັບເລກທີ 04/ນຍ, ລົງວັນທີ 08 ມັງກອນ 2024, ຕາມການສະເໜີຂອງກອງປະຊຸມທຸລະກິດລາວ ຄັ້ງທີ 14 ເພື່ອຍົກຖານະຂອງກອງປະຊຸມທຸລະກິດລາວຂຶ້ນ ແລະ ໃຫ້ມີກົນໄກ ແລະ ການຈັດຕັ້ງປະຕິບັດ ທີ່ເປັນທາງການ, ເພີ່ມການເອົາໃຈໃສ່ຂອງບັນດາກະຊວງ, ແຂວງ ແລະ ຂະແໜງການພາກລັດ ທີ່ກ່ຽວຂ້ອງໃນການປຶກສາຫາລື.

2. ແນວໂນ້ມເສດຖະກິດ ລາວ ໃນປີ 2024 ໂດຍ ຜູ້ຕາງໜ້າ ຈາກ ທະນາຄານໂລກ ປະຈຳ ລາວ

ທ່ານ ນາງ ແກ້ວມະນີວອນ ພິມມະຫາໄຊ, ນັກເສດຖະສາດ ຈາກຫ້ອງການ ທະນາຄານໂລກ ປະຈຳ ສປປ ລາວ ໄດ້ນຳສະເໜີກ່ຽວກັບແນວໂນ້ມເສດຖະກິດ ລາວໃນປີ 2024 ແລະ ເນື້ອໃນຫຼັກເຊິ່ງສາມາດສັງລວມໄດ້ດັ່ງນີ້:

- ປັດໃຈພາຍໃນ ແລະ ພາຍນອກ ທີ່ບໍ່ແນ່ນອນເຊັ່ນ: ການຂາດສະພາບຄ່ອງຂອງເງິນຕາຕ່າງປະເທດ, ການຂາດແຄນແຮງງານ, ພື້ນຖານຂອງທະນາຄານທຸລະກິດ ທີ່ບໍ່ເຂັ້ມແຂງ, ແລະ ຄວາມຄືບໜ້າໃນການປະຕິຮູບໂຄງສ້າງເສດຖະກິດທີ່ຈຳກັດ, ແລະ ອັດຕາການເຕີບໂຕຂອງເສດຖະກິດໂລກ ແລະ ພາກພື້ນທີ່ຫລຸດລົງ, ການແຂງຄ່າຂອງເງິນໂດລາສະຫະລັດ, ແລະ ການຂຶ້ນລາຄານ້ຳມັນເຊື້ອໄຟ ແລະ ອາຫານ ຈະສືບຕໍ່ມີຄວາມສ່ຽງຕໍ່ ແນວໂນ້ມການຂະຫຍາຍຕົວຂອງເສດຖະກິດລາວ ໃນປີ 2024;
- ເພື່ອຟື້ນຟູ ແລະ ກະຕຸ້ນການຂະຫຍາຍຕົວຂອງເສດຖະກິດ, ລັດຖະບານຄວນດຳເນີນປະຕິຮູບຕົ້ນຕໍ ດັ່ງນີ້: 1) ເຈລະຈາ ແລະ ປັບໂຄງສ້າງໜີ້ສາທາລະນະ; 2) ປັບປຸງການເງິນພາກລັດ (ລົບລ້າງການຍົກເວັ້ນພາສີ-ອາກອນ ພາຍໃຕ້ກົດໝາຍສົ່ງເສີມການລົງທຶນ, ປັບປຸງກົດໝາຍວ່າດ້ວຍອາກອນຊົມໃຊ້, ຍົກປະສິດທິຜົນການຄຸ້ມຄອງພາສີ-ອາກອນ ແລະ ຕິດຕາມຄວາມສ່ຽງທາງດ້ານການເງິນ); ສືບຕໍ່ລົງທຶນໃສ່ການພັດທະນາຊັບພະຍາກອນມະນຸດ, ຍົກເລີກສິ່ງກີດຂວາງດ້ານການຄ້າ (ປັບປຸງສາລະບານອັດຕາພາສີ, ການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ, ແລະ ລົບລ້າງສິ່ງກີດຂວາງ ທີ່ບໍ່ແມ່ນອັດຕາພາສີ), ຫຼຸດຜ່ອນການແຊກແຊງ ທີ່ພາໃຫ້ເກີດການຈັດສັນແຮງງານ, ທຶນ ແລະ ທີ່ດິນທີ່ບໍ່ມີປະສິດທິຜົນ.

3. ຂໍ້ຄິດເຫັນຕໍ່ສະພາບແວດລ້ອມການດຳເນີນທຸລະກິດ ຢູ່ ສປປ ລາວ ໃນມູມມອງຂອງນັກລົງທຶນຕ່າງປະເທດ

ໃນວາລະນີ້ ທ່ານ Teruya KAWAI, ປະທານ ສະພາການຄ້າ ແລະ ອຸດສາຫະກຳ ຍີ່ປຸ່ນ ປະຈຳລາວ, ທ່ານ Alistair Brown, ປະທານ ສະພາການຄ້າ ອັງກິດສະຕາລີ ປະຈຳລາວ, ແລະ ທ່ານ Peter Fogde, ປະທານ ສະພາການຄ້າ ເອີຣົບ ປະຈຳລາວ, ຕາງໜ້າໃຫ້ນັກລົງທຶນຕ່າງປະເທດ ໃນ ສປປ

ລາວ, ນຳສະເໜີ ຂໍ້ຄິດເຫັນຕໍ່ສະພາບແວດລ້ອມການດຳເນີນທຸລະກິດຢູ່ ສປປ ລາວ, ເຊິ່ງສັງລວມໄດ້ດັ່ງນີ້:

3.1 ໂດຍລວມ ຄວາມສົນໃຈຂອງນັກລົງທຶນຕ່າງປະເທດ ທີ່ຢາກມາລົງທຶນໃນ ສປປ ລາວ ຍັງມີແນວໂນ້ມເພີ່ມຫຼາຍຂຶ້ນ ໂດຍສະເພາະ ຫຼັງຈາກທີ່ ສປປ ລາວ ໄດ້ມີການປັບປຸງດ້ານໂຄງລ່າງພື້ນຖານການຂົນສົ່ງ ເພື່ອໃຫ້ກາຍເປັນປະເທດເຊື່ອມຈອດ.

3.2 ຢ່າງໃດກໍ່ຕາມ, ນັກລົງທຶນຕ່າງປະເທດ ເຫັນໄດ້ເຖິງສິ່ງທ້າທາຍ ແລະ ມີຄວາມກັງວົນ ຫຼາຍດ້ານ ເປັນຕົ້ນແມ່ນ:

- ຄວາມບໍ່ແນ່ນອນຂອງສະພາບແວດລ້ອມດ້ານລະບຽບກົດໝາຍ ທີ່ຕິດພັນກັບ ຂະບວນການສ້າງທີ່ມີສ່ວນຮ່ວມຂອງພາກທຸລະກິດທີ່ຈຳກັດ, ການປະກາດໃຊ້ລະບຽບໃໝ່ ທີ່ໃຫ້ເວລາພາກທຸລະກິດບໍ່ພຽງພໍ ແລະ ການຂາດຜົນສັກສິດຂອງການຈັດຕັ້ງປະຕິບັດ;
- ຄ່າໃຊ້ຈ່າຍດ້ານການຂົນສົ່ງ ແລະ ຄ່າໂລຈິສຕິກເພີ່ມຂຶ້ນສູງ ໂດຍສະເພາະ ຫຼັງຈາກທີ່ມີຂໍ້ຈຳກັດບໍ່ໃຫ້ລົດຕ່າງປະເທດເຂົ້າມາສົ່ງ ຫຼື ຮັບເອົາສິນຄ້າຢູ່ ສປປ ລາວ (ແຈ້ງການ ສະບັບເລກທີ 04718/ຍທຂ) ແລະ ຄ່າທຳນຽມ-ຄ່າບໍລິການຂອງທ່າບົກກໍ່ສູງ;
- ການຫຼຸດລົງຢ່າງໄວວາຂອງຄ່າເງິນກີບ ແລະ ຄວາມຫຍຸ້ງຍາກໃນການແລກປ່ຽນເງິນຕາຕ່າງປະເທດ ສົ່ງຜົນກະທົບສູງຕໍ່ການບໍລິຫານຈັດການດ້ານການເງິນ ແລະ ການເຄື່ອນໄຫວ ຂອງທຸລະກິດ. ພ້ອມກັນນັ້ນ, ຂໍ້ກຳນົດດ້ານເງິນຕາ (ໂດຍສະເພາະຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 333/ທຫລ), ມີຄວາມສ່ຽງທີ່ຈະສ້າງສະພາບການຂາດເຂີນເງິນຕາຕ່າງປະເທດຫຼາຍຂຶ້ນ;
- ການຂາດແຄນຊັບພະຍາກອນມະນຸດ: ໃນຂະນະທີ່ແຮງງານທີ່ບໍ່ມີທັກສະມີການຫຼັ່ງໄຫຼອອກໄປເຮັດວຽກຢູ່ຕ່າງປະເທດນັບມື້ນັບຫຼາຍຂຶ້ນ, ແຮງງານ ທີ່ໄດ້ຮັບການສຶກສາ ແລະ ການຝຶກຝົນດ້ານສີມື ກໍ່ຍັງມີໜ້ອຍ, ເຊິ່ງເຮັດໃຫ້ນັກລົງທຶນປະສົບບັນຫາການຂາດແຄນແຮງງານ;
- ການເລືອກເຟັ້ນເອົາການລົງທຶນທີ່ມີຄຸນນະພາບ: ຄວນມີການເລືອກເຟັ້ນເອົາການລົງທຶນຕ່າງປະເທດທີ່ເອົາໃຈໃສ່ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ມີການບໍລິຫານຈັດການທີ່ດີ ເຊິ່ງການລົງທຶນທີ່ມີຄຸນນະພາບເຫຼົ່ານີ້ ຄວນໄດ້ຮັບການສະໜັບສະໜູນ ແລະ ໃຫ້ນະໂຍບາຍສົ່ງເສີມທີ່ເໝາະສົມ.

3.3 ສະພາການຄ້າຕ່າງປະເທດ ຍິນດີຈະສືບຕໍ່ສະໜັບສະໜູນ ລັດຖະບານ ແຫ່ງ ສປປ ລາວ ເພື່ອບັນລຸເປົ້າໝາຍທີ່ໄດ້ກຳນົດໄວ້ໃນ ແຜນພັດທະນາເສດຖະກິດ ແລະ ສັງຄົມ 5 ປີ ຄັ້ງທີ IX, ເພື່ອຫຼຸດພົ້ນຈາກປະເທດດ້ອຍພັດທະນາ, ແລະ ສົ່ງເສີມການພັດທະນາແບບຍືນຍົງ ຕາມພາລະບົດບາດຂອງຕົນ.

4. ລາຍງານຜົນຂອງການປຶກສາຫາລື ພາຍໃຕ້ກົນໄກກອງປະຊຸມທຸລະກິດລາວ ແລະ ຂໍ້ຄິດເຫັນຂອງພາກທຸລະກິດ ກ່ຽວກັບບູລິມະສິດໃນການປະຕິຮູບສະພາບແວດລ້ອມການດຳເນີນທຸລະກິດ ສຳລັບປີ 2024

ທ່ານ ປອ. ນາງ ວາລີ ເວດສະພົງ, ຮອງປະທານ ສຄອຊ, ຕາງໜ້າໃຫ້ກອງເລຂາກອງປະຊຸມທຸລະກິດລາວ ໄດ້ລາຍງານຄວາມຄືບໜ້າຂອງການປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ພາຍໃຕ້ກົນໄກກອງປະຊຸມທຸລະກິດລາວ ໃນໄລຍະໜຶ່ງປີຜ່ານມາ ເຊິ່ງສາມາດສະຫຼຸບໄດ້ດັ່ງນີ້:

4.1 ຄວາມຄືບໜ້າຂອງການແກ້ໄຂ 20 ຂໍ້ສະເໜີທີ່ຄົງຄ້າງຈາກກອງປະຊຸມທຸລະກິດລາວ ຄັ້ງທີ 14:

ອີງຕາມການຕີລາຄາຮອດປະຈຸບັນ ກອງເລຂາ ແລະ ຜູ້ປະຈຳການຄະນະປະສານງານພາກລັດເຫັນວ່າ:

- ຂໍ້ສະເໜີ ທີ່ໄດ້ຮັບການແກ້ໄຂແລ້ວ ໃນດ້ານຫຼັກການມີ 6 ຂໍ້ສະເໜີ ເຊິ່ງກອງເລຂາຈະໄດ້ດຳເນີນການສຳຫຼວດຄຳຄິດເຫັນກັບພາກທຸລະກິດທີ່ກ່ຽວຂ້ອງ ເພື່ອຕິດຕາມໃນດ້ານການຈັດຕັ້ງປະຕິບັດ;
- ຂໍ້ສະເໜີ ທີ່ໄດ້ຮັບຄຳຕອບແລ້ວວ່າ ຍັງບໍ່ສາມາດແກ້ໄຂຕາມທີ່ພາກທຸລະກິດສະເໜີໄດ້ເທື່ອ ແຕ່ຈະມີການປຶກສາຫາລືກັນຕື່ມ ເພື່ອຕົກລົງເຫັນດີ ຕໍ່ທິດທາງການແກ້ໄຂຄືນໃໝ່ ມີ 03 ຂໍ້ສະເໜີ;
- ຂໍ້ສະເໜີ ທີ່ໄດ້ຮັບການເຫັນດີຈາກພາກສ່ວນກ່ຽວຂ້ອງແລ້ວວ່າຈະມີການແກ້ໄຂ ເຊິ່ງປະກອບມີ 11 ຂໍ້ສະເໜີ.

4.2 ຂໍ້ສະເໜີບູລິມະສິດສຳລັບປີ 2024 ທີ່ສະເໜີຕໍ່ກອງປະຊຸມທຸລະກິດລາວຄັ້ງທີ 15

ສຳລັບປີ 2024, ໜ່ວຍງານປຶກສາຫາລືພາກທຸລະກິດ ໄດ້ຄັດເລືອກເອົາ 12 ຂໍ້ສະເໜີບູລິມະສິດທີ່ເຫັນວ່າສາມາດພິຈາລະນາແກ້ໄຂໄດ້ໃນໄລຍະສັ້ນ ພາຍໃນປີ 2024 ເຊິ່ງແບ່ງເປັນ 7 ກຸ່ມບັນຫາ ດັ່ງນີ້:

1. ການປັບປຸງຂັ້ນຕອນການກໍ່ຕັ້ງທຸລະກິດ ແລະ ການລົງທຶນ;
2. ການປັບປຸງວຽກງານການອຳນວຍຄວາມສະດວກດ້ານການຄ້າ;
3. ການປັບປຸງດ້ານອາກອນ;
4. ການປັບປຸງຄຸນນະພາບຂອງການສະໜອງ ແລະ ສົ່ງເສີມການພັດທະນາແບບຍືນຍົງຂອງຂະແໜງພະລັງງານໄຟຟ້າ;
5. ການປັບປຸງນະໂຍບາຍ, ແລະ ມາດຕະການສົ່ງເສີມການທ່ອງທ່ຽວ;
6. ການປັບປຸງການເຂົ້າເຖິງແຮງງານຂອງພາກທຸລະກິດ;
7. ການສົ່ງເສີມສະຖຽນລະພາບຂອງຂະແໜງການທະນາຄານ ແລະ ການເງິນ.

(ລາຍລະອຽດຂໍ້ສະເໜີ ແລະ ຄວາມຄືບໜ້າການແກ້ໄຂ ທີ່ຄົງຄ້າງຈາກກອງປະຊຸມທຸລະກິດລາວ ຄັ້ງທີ 14 ແລະ ຂໍ້ສະເໜີບູລິມະສິດສຳລັບ ປີ 2024 ໄດ້ສັງລວມໃນເອກະສານຊ້ອນທ້າຍ 1 ແລະ 2).

## IV. ພາກປະກອບຄຳເຫັນ

ບັນດາຂະແໜງການທີ່ກ່ຽວຂ້ອງພາກລັດ ໄດ້ປະກອບຄຳເຫັນ ຕໍ່ຂໍ້ສະເໜີຂອງພາກທຸລະກິດ ດັ່ງລຸ່ມນີ້:

1. ທ່ານ ປອ. ມະໂນທອງ ວົງໄຊ, ຮອງລັດຖະມົນຕີ, ກະຊວງ ອຄ, ໄດ້ປະກອບຄຳເຫັນດັ່ງນີ້:
   - ຕໍ່ສອງຂໍ້ສະເໜີ ທີ່ຕິດພັນກັບການປັບປຸງ 10 ໃບອະນຸຍາດດຳເນີນທຸລະກິດຂອງ 06 ຂະແໜງການບູລິມິສິດ ທີ່ພາກທຸລະກິດຍົກຂຶ້ນໃນກອງປະຊຸມທຸລະກິດລາວ ຄັ້ງທີ 14, ແມ່ນແກ້ໄຂສຳເລັດແລ້ວ ຕາມທີ່ກອງເລຂາໄດ້ລາຍງານໃນກອງປະຊຸມ;
   - ສຳລັບຂໍ້ສະເໜີ ທີ່ຍັງບໍ່ທັນສາມາດແກ້ໄຂໄດ້ ແມ່ນຂໍ້ສະເໜີໃຫ້ ກະຊວງ ອຄ ອອກນິຕິກຳສະເພາະວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມເສດຖະກິດ, ເຊິ່ງຈະເປັນການຜັນຂະຫຍາຍ ມາດຕາ 22 ຂອງດຳລັດ 238/ລບ, ກ່ຽວກັບການສ້າງຕັ້ງສະມາຄົມເສດຖະກິດ. ປະຈຸບັນ, ກົມການຄ້າພາຍໃນ ຂອງ ກະຊວງ ອຄ ພວມຢູ່ໃນຂັ້ນຕອນການສ້າງຄຳແນະນຳດັ່ງກ່າວ, ແລະ ຄາດໝາຍວ່າຈະສາມາດອອກຄຳແນະນຳໄດ້ ພາຍໃນເດືອນມິຖຸນາ 2024.

2. ທ່ານ ລິດຕາ ຂັດຕິຍະ, ຮອງລັດຖະມົນຕີ, ກະຊວງ ກະຊວງໂຍທາທິການ ແລະ ຂົນສົ່ງ (ກຍທຂ), ໄດ້ປະກອບຄຳເຫັນ ດັ່ງນີ້:
   - ປະຈຸບັນ ຮ່າງດຳລັດວ່າດ້ວຍທ່າບົກ ສະບັບປັບປຸງ ແມ່ນໄດ້ຜ່ານ ກອງປະຊຸມລັດຖະບານ ຄັ້ງວັນທີ 26 ມີນາ 2024 ແລ້ວ ແລະ ກຳລັງຢູ່ໃນຂັ້ນຕອນການປັບປຸງເນື້ອໃນສຸດທ້າຍ. ກ່ຽວ

ກັບການກຳນົດໂຄງສ້າງຄ່າບໍລິການທ່າບົກ, ກຍທຂ ໄດ້ຄິດໄລ່ຄ່າບໍລິການທີ່ສົມເຫດສົມຜົນຂອງ 7 ລາຍການບໍລິການທີ່ເປັນບູລິມະສິດ ແລະ ທີ່ມີຜົນກະທົບໂດຍກົງ ຕໍ່ຜູ້ໃຊ້ບໍລິການທ່າບົກ, ເຊິ່ງໄດ້ເຫັນດີເອກະພາບ ກັບ ຜູ້ພັດທະນາ ທັງ 3 ທ່າບົກ. ກຍທຂ ຈະສືບຕໍ່ຈັດກອງປະຊຸມ ທາບທາມກັບຜູ້ຊົມໃຊ້ ໃນມໍ່ໆນີ້ ເພື່ອຈະສະເໜີຂໍອະນຸມັດຈາກລັດຖະບານ ເພື່ອນຳໃຊ້ລາຄາຄ່າບໍລິການດັ່ງກ່າວ. ສຳລັບຄ່າບໍລິການອື່ນໆ ທີ່ລະບຸຢູ່ໃນຄ່າບໍລິການທ່າບົກ, ປະຈຸບັນ ກຍທຂ ສົມທົບກັບ ຊ່ຽວຊານສະເພາະດ້ານການຄິດໄລ່ໂຄງສ້າງລາຄາ ໂດຍກຳລັງລົງເກັບກຳ ແລະ ຄິດໄລ່ໂຄງສ້າງລາຄາກາງ ຄາດວ່າຈະສຳເລັດ ໃນເດືອນມິຖຸນາ 2024;

- ຜ່ານການບັງຄັບໃຊ້ແຈ້ງການ ສະບັບເລກທີ 04718/ຍທຂ ມາໄດ້ໄລຍະໜຶ່ງ ເຫັນວ່າ ຍັງພົບບັນຫາ ລົດຂົນສົ່ງສິນຄ້າຂອງລາວ ບໍ່ທັນຕອບສະໜອງໄດ້ຢ່າງພຽງພໍ ທາງດ້ານປະລິມານ ຄຸນນະພາບ, ປະເພດລົດວິຊາສະເພາະ ແລະ ລາຄາຂົນສົ່ງ. ກຍທຂ ແລະ ບັນດາກະຊວງກ່ຽວຂ້ອງ ໄດ້ປຶກສາຫາລືກັນ ແລະ ໄດ້ມີນະໂຍບາຍຜ່ອນຜັນ ໂດຍການອະນຸຍາດ ໃຫ້ລົດເປົ່າ ຫຼື ຕູ້ສິນຄ້າເປົ່າຈາກຕ່າງປະເທດ ເຂົ້າມາຮັບເອົາສິນຄ້າ ເປັນແຕ່ລະກໍລະນີ ຕາມການສະເໜີຂອງຜູ້ສົ່ງອອກ (ມີບັນຊີຈຳນວນລົດ ແລະ ຂໍ້ກຳນົດໄລຍະເວລາ) ໂດຍຜ່ານການຢັ້ງຢືນຈາກ ພະແນກ ຍທຂ ແຂວງ ແລະ ສະມາຄົມລົດຂົນສົ່ງ ແລ້ວ ກະຊວງ ຍທຂ ຈະພິຈາລະນາ. ຜ່ານມາ ກໍ່ໄດ້ອອກແຈ້ງການ ສະບັບ ເລກທີ 09711/ກຂສ, ລົງວັນທີ 24 ເມສາ 2023, ເພື່ອອະທິບາຍການຈັດຕັ້ງປະຕິບັດ. ທິດທາງແກ້ໄຂຕໍ່ໜ້າ ໃນໄລຍະສັ້ນ, ກຍທຂ ຈະຮວບຮວມເອົາທຸກບັນຫາ ໃນການເຂົ້າ-ອອກຂອງລົດຂົນສົ່ງສິນຄ້າ ຂອງ ສປປ ລາວ ແລະ ລົດຕ່າງປະເທດ ແລະ ຈະເປີດກອງປະຊຸມ ຮ່ວມກັບທຸກພາກສ່ວນທີ່ກ່ຽວຂ້ອງ, ທັງສູນກາງ ແລະ ທ້ອງຖິ່ນ ເພື່ອເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດ ໃນທ້າຍເດືອນ ເມສາ 2024 ນີ້. ສ່ວນໄລຍະຍາວ ແມ່ນຈະສືບຕໍ່ແກ້ໄຂ ຢູ່ສັນຍາຂົນສົ່ງ ໂດຍຜ່ານການເຈລະຈາປັບປຸງສັນຍາຄືນ ກັບບັນດາປະເທດເພື່ອນບ້ານ ໃຫ້ກຳນົດລະອຽດ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ.

3. ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ, ຮອງຫົວໜ້າກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ (ກະຊວງ ຜທ), ໄດ້ປະກອບຄຳເຫັນດັ່ງນີ້:
   - ຕໍ່ກັບຂໍ້ສະເໜີ ໃຫ້ກະຊວງ ຜທ ປັບປຸງລາຍການບັນຊີກິດຈະການຄວບຄຸມໃຫ້ເຫຼືອໜ້ອຍທີ່ສຸດ, ກະຊວງ ຜທ ໄດ້ຄັດຈ້ອນບັນຊີກິດຈະການຄວບຄຸມ ຫຼຸດຈາກ 44 ລາຍການ ມາເປັນ 19 ລາຍການ, ແລະ ບັນຊີກິດຈະການສຳປະທານ ຈາກ 23 ລາຍການ ຍັງເຫຼືອ 22 ລາຍການ ແລະ ໄດ້ສະເໜີຂໍການອະນຸມັດຈາກລັດຖະບານແລ້ວ ເຊິ່ງຄາດວ່າຈະຖືກຮັບຮອງໃນມໍ່ໆນີ້;
   - ຕໍ່ຂໍ້ສະເໜີ ໃຫ້ມີການປັບປຸງລະບຽບການທີ່ຕິດພັນກັບການສ້າງຕັ້ງຫ້ອງການຜູ້ຕາງໜ້າ ຕາມການສະເໜີຂອງສະພາການຄ້າ ແລະ ອຸດສາຫະກຳ ຍີ່ປຸ່ນປະຈຳລາວ ແມ່ນຢູ່ໃນຂັ້ນຕອນການປັບປຸງ ແລະ ມີແຜນຈະຖືກຮັບຮອງໃນໄຕມາດ 2 ຂອງປີ 2024 ນີ້.

4. ທ່ານ ພູເຂົາຄຳ ວັນນະວົງໄຊ, ຫົວໜ້າກົມພາສີ, ກະຊວງການເງິນ, ໄດ້ປະກອບຄຳເຫັນ ດັ່ງນີ້:
   - ກົມພາສີໄດ້ສຳເລັດການຕິດຕັ້ງລະບົບ NSWA+ ຢູ່ 28 ດ່ານພາສີສາກົນ ແລະ ຫ້ອງການພາສີປະຈຳລະບົບສາງ ແລະ ອື່ນໆໃນຂອບເຂດທົ່ວປະເທດ ເຊິ່ງໄດ້ນຳໃຊ້ເຂົ້າໃນການຄຸ້ມຄອງການແຈ້ງພາສີ ຢ່າງເປັນເອກະພາບ ແລະ ໃຊ້ໄດ້ປົກກະຕິ, ສາມາດດຳເນີນການແຈ້ງພາສີໄດ້ທຸກປະເພດສິນຄ້າ ເຊິ່ງຄາດໝາຍຈະໃຫ້ສາມາດເລີ່ມປະຕິບັດລະບົບດັ່ງກ່າວຢ່າງສົມບູນ ໃນງວດທີ 2 ປີ 2024;

- ກົມພາສີໄດ້ຕິດຕັ້ງລະບົບເກັບຄ່າທຳນຽມທາງອີເລັກໂຕນິກ ສຳເລັດແລ້ວ 9 ດ່ານສາກົນໃຫຍ່. ກະຊວງການເງິນ ຈະສືບຕໍ່ເປັນເຈົ້າການປະສານສົມທົບກັບພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ເພື່ອລວມສູນການເກັບຄ່າທຳນຽມ ແລະ ຄ່າບໍລິການຢູ່ດ່ານ ຜ່ານລະບົບອີເລັກໂຕນິກ;
- ສຳລັບການແຈ້ງມອບພັນທະອາກອນໄດ້ລະບຸ ຂັ້ນຕອນ ແລະ ກຳນົດເວລາໃນນິຕິກຳຂອງຂະແໜງການເງິນຊັດເຈນແລ້ວ. ໃນທາງປະຕິບັດ ກົມສ່ວຍສາອາກອນ ຈະສືບຕໍ່ແກ້ໄຂບັນຫາດັ່ງກ່າວ ໃຫ້ສຳເລັດພາຍໃນປີ 2024;
- ກົມສ່ວຍສາອາກອນມີນິຕິກຳກ່ຽວກັບການນຳໃຊ້ໃບເກັບເງິນແລ້ວ ເພື່ອໃຫ້ຜູ້ປະກອບການທຸລະກິດທຸກຂະໜາດ ນຳໃຊ້ໃບເກັບເງິນຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ. ປະຈຸບັນ ກົມສ່ວຍສາອາກອນ ກະຊວງການເງິນ ໄດ້ຈັດພິມໃບເກັບເງິນຈຸນລະວິສາຫະກິດ ແລະ ໄດ້ແຈກຢາຍໃຫ້ສ່ວຍສາອາກອນ ປະຈຳແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ເພື່ອຕອບສະໜອງ ໃຫ້ແກ່ MSMEs ໄດ້ນຳໃຊ້ຕາມຄວາມຕ້ອງການ. ຂະແໜງສ່ວຍສາອາກອນໄດ້ສ້າງແຜນ ໃນການລົງເຜີຍແຜ່ ເພື່ອໃຫ້ຜູ້ປະກອບການຮັບຊາບ ແລະ ສາມາດປະຕິບັດໄດ້. ຄາດໝາຍວ່າ ໃນໄຕມາດທີ 2 ຂອງປີ 2024 ຈະສາມາດປະຕິບັດໄດ້ຢ່າງເຕັມຮູບແບບ.

5. ທ່ານ ພົງໄຊສັກ ອິນທະລາດ, ຮອງລັດຖະມົນຕີ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ກະຊວງ ຮສສ), ໄດ້ປະກອບຄຳເຫັນ ດັ່ງນີ້:
   - ກະຊວງ ຮສສ ໄດ້ເລີ່ມມີລະບົບການເກັບກຳຂໍ້ມູນມາໄດ້ຫລາຍປີ ເລີ່ມຈາກແບບງ່າຍດາຍກ້າວມາເປັນແບບນຳໃຊ້ເທັກໂນໂລຊີເຂົ້າມາຊ່ວຍເທື່ອລະກ້າວຕາມຄວາມສາມາດ ແລະ ໃນວັນທີ 22 ມີນາ 2024 ທີ່ຜ່ານມາ ກໍ່ໄດ້ເປີດໂຕ ຮູບແບບ ຫຼື ຊ່ອງທາງ ການໃຫ້ບໍລິການຈັດຫາງານ ສຳລັບການປະກາດຮັບສະໝັກງານ ແລະ ການຊອກວຽກ ແລະ ຝາກ CV ຂອງແຮງງານ ແບບອອນລາຍຢູ່ໃນເວັບໄຊ ລະບົບຂໍ້ມູນຂ່າວສານຕະຫລາດແຮງງານ ທີ່ www.lmi.gov.la ແລະ ໃນອະນາຄົດອັນໃກ້ນີ້ ຈະເລັ່ງປັບປຸງ ລະບົບການຂຶ້ນທະບຽນແຮງງານລາວ ແລະ ຕ່າງປະເທດ ພ້ອມທັງເຊື່ອມໂຍງກັບ ລະບົບຄຸ້ມຄອງພົນລະເມືອງ (CRVs), ລະບົບສ່ວຍສາອາກອນ (TaxRIS), ລະບົບຂໍ້ມູນອາຊີວະສຶກສາ ແລະ ຈະສືບຕໍ່ ພັດທະນາ ເພື່ອຂໍເຊື່ອມໂຍງໄປເຖິງລະບົບການອອກວີຊ່າສຳລັບແຮງງານຕ່າງປະເທດ ຂອງກະຊວງການຕ່າງປະເທດ ແລະ ລະບົບຄຸ້ມຄອງຄົນຕ່າງປະເທດ ຂອງກະຊວງປ້ອງກັນຄວາມສະຫງົບ.;
   - ຜ່ານມາການສຳຫຼວດກຳລັງແຮງງານລະດັບຊາດ ໄດ້ດຳເນີນມາແລ້ວ 3 ຄັ້ງ ຮ່ວມກັບສູນສະຖິຕິແຫ່ງຊາດ, ຄັ້ງລ່າສຸດແມ່ນປີ 2022. ກະຊວງ ຮສສ ຮ່ວມກັບ ສູນສະຖິຕິແຫ່ງຊາດໄດ້ສະເໜີລັດຖະບານ ເພື່ອກຳນົດທິດທາງໃຫ້ ການສຳຫຼວດດ້ານແຮງງານ ມີຄວາມຖີ່ຫຼາຍຂຶ້ນ, ສະນັ້ນ ທິດທາງໃນ ອະນາຄົດ ກະຊວງ ຮສສ ຈະໄດ້ລົງສຳຫຼວດດ້ານແຮງງານໃຫ້ຖີ່ຂຶ້ນເປັນປະຈຳແຕ່ລະປີ ຫຼື ປະຈຳໄຕມາດ.

6. ທ່ານ ປອ. ຈັນສະແຫວງ ບຸນຍົງ, ຮອງລັດຖະມົນຕີ, ກະຊວງກະຊວງພະລັງງານ ແລະ ບໍ່ແຮ່, ໄດ້ປະກອບຄຳເຫັນ ດັ່ງນີ້:
   - ຜ່ານການຈັດຕັ້ງປະຕິບັດແຜນປະຕິຮູບ ແຕ່ປີ 2020 ຫາປີ 2023 ແມ່ນມີຄວາມຄືບໜ້າເປັນຮູບປະທຳແລ້ວບາງສ່ວນ ແຕ່ເປັນການຫຼຸດລາຍຈ່າຍພຽງສ່ວນນ້ອຍຖ້າທຽບກັບອັດຕາໜີ້ສິນ, ບວກກັບການອ່ອນຄ່າຂອງເງິນກີບເຮັດໃຫ້ໂຕເລກ ລັດວິສາຫະກິດໄຟຟ້າລາວ ຍັງຂາດທຶນຢູ່. ອີງໃສ່ແຈ້ງການ ຈາກ ຫສນຍ ເລກທີ 06 ລົງວັນທີ 19 ມັງກອນ 2024, ກະຊວງພະລັງງານ ແລະ ບໍ່ແຮ່ ສະເໜີໃຫ້ທຸກຄົນຊ່ວຍຊຸກຍູ້ຜັກດັນການປັບປຸງໂຄງສ້າງລາຄາໄຟຟ້າຈຳໜ່າຍໃນປະເທດ ປີ 2024 ຫາ 2028 ໃຫ້ທັນປະກາດໃຊ້ໃນຊ່ວງລະດູຝົນປີ 2024 ນີ້ ເພື່ອໃຫ້ສະທ້ອນຕົ້ນທຶນຕົວຈິງ ໂດຍສະເພາະ ແມ່ນຕົ້ນທຶນທີ່ຊື້ໄຟຟ້າຈາກແຫຼ່ງ

ຜະລິດຕ່າງໆຕ້ອງມີຄວາມໂປ່ງໃສ ແລະ ລາຄາຈຳໜ່າຍຕ້ອງເປັນທຳຕໍ່ຜູ້ຜະລິດ, ຜູ້ຈຳໜ່າຍ ແລະ ຜູ້ຊົມໃຊ້ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ປະໂຫຍດຮ່ວມກັນ;

- ລັດຖະບານກໍ່ໄດ້ສ້າງຕັ້ງບໍລິສັດ EDLT ຂຶ້ນມາເພື່ອຮັບຜິດຊອບລະບົບສົ່ງໄຟຟ້າແຮງສູງ, ສະນັ້ນ, ບັນດາເຂດນິຄົມອຸດສາຫະກຳ ແລະ ເຂດເສດຖະກິດພິເສດຈະໄດ້ມີການເສີມສະຖານີໄຟຟ້າແຮງສູງຂຶ້ນ ເພື່ອໃຫ້ໄຟຟ້າສະຖຽນຂຶ້ນ.

7. ທ່ານ ນາງ ຂັນແກ້ວ ຫລ້າມະນີເງົາ, ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ (ທຫລ), ໄດ້ປະກອບຄຳເຫັນ ດັ່ງນີ້:
   - ຕໍ່ຂໍ້ສະເໜີ ໃຫ້ ທຫລ ພິຈາລະນາຄືນນິຕິກຳ ສະບັບເລກທີ 333/ທຫລ, ລົງວັນທີ 07 ມີນາ 2024, ມາດຕາ 8 ທີ່ກຳນົດໃຫ້ທະນາຄານທຸລະກິດ ຕ້ອງແບ່ງສ່ວນເງິນຕາຂາຍໃຫ້ແກ່ທະນາຄານແຫ່ງ ສປປ ລາວ ໃນອັດຕາສ່ວນຢ່າງໜ້ອຍ 30% ພາຍໃນວັນທີເກັບຊື້ ຫຼື ວັນລັດຖະການຖັດມາ ໂດຍນຳໃຊ້ອັດຕາຂາຍຂອງທະນາຄານທຸລະກິດ, ເຫດຜົນທີ່ ທຫລ ກຳນົດໃນຮູບແບບດັ່ງກ່າວ ແມ່ນເພື່ອນຳເອົາເງິນຕາຕ່າງປະເທດ ທີ່ເກັບຊື້ໄດ້ນັ້ນມານຳໃຊ້ເພື່ອຈຸດປະສົງໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ໂດຍສະເພາະ ການດັດສົມການນຳເຂົ້າສິນຄ້າບູລິມະສິດ ເປັນຕົ້ນແມ່ນ ນ້ຳມັນເຊື້ອໄຟ, ຢາປົວພະຍາດ, ສິນຄ້າອຸປະໂພກ ແລະ ບໍລິໂພກ, ເມື່ອໃດທີ່ ສປປ ລາວ ມີສະຖຽນລະພາບທາງດ້ານເງິນຕາທີ່ດີຂຶ້ນ ນະໂຍບາຍດັ່ງກ່າວກໍ່ຈະຄ່ອຍໆຫຼຸດຜ່ອນລົງແຕ່ລະໄລຍະ;
   - ຂໍ້ຕົກລົງສະບັບເລກທີ 512/ທຫລ, ລົງວັນທີ 26/06/2018, ວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້, ທຫລ ຈະຮັບເອົາໄປຄົ້ນຄວ້າພິຈາລະນາ ເຊິ່ງປະຈຸບັນ ທຫລ ກຳລັງຄົ້ນຄວ້າປັບປຸງຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ ຂອງທະນາຄານ ສະບັບເລກທີ 512/ທຫລ, ລົງວັນທີ 26 ມິຖຸນາ 2018, ເຊິ່ງແນວທາງການຄົ້ນຄວ້າປັບປຸງ ແມ່ນຈະປັບປຸງໃຫ້ມີຄວາມແທດເໝາະກັບສະພາບຕົວຈິງໃຫ້ຫຼາຍຂຶ້ນ ພ້ອມທັງຮອງຮັບການຈັດຕັ້ງປະຕິບັດ IFRS 9 ເຊິ່ງຄາດໝາຍໃຫ້ສຳເລັດໃນປີ 2024 ນີ້;
   - ສຳລັບຂໍ້ສະເໜີ ໃຫ້ ທຫລ ປະເມີນຄືນເພື່ອປັບປຸງຂໍ້ກຳນົດທີ່ຕິດພັນກັບ ການປະເມີນຫຼັກຊັບຄ້ຳປະກັນໃຫ້ເໝາະສົມ ໂດຍສະເພາະແມ່ນຄຳແນະນຳກ່ຽວກັບ ການປະຕິບັດການປະເມີນຫຼັກຊັບຄ້ຳປະກັນ ສະບັບເລກທີ 189/ກຄທ, ລົງວັນທີ 8/2/2022, ນອກຈາກນິຕິກຳດັ່ງກ່າວ, ທຫລ ໄດ້ມີຄຳແນະນຳເພີ່ມເຕີມ ສະບັບເລກທີ 403/ກຄທ, ລົງວັນທີ 01 ມິຖຸນາ 2022, ທຫລ ຈະຮັບເອົາມາພິຈາລະນາອອກຄຳແນະນຳເພີ່ມເຕີມ;
   - ທຫລ ໄດ້ມີຄຳແນະນຳການຈັດຕັ້ງປະຕິບັດ ຂໍ້ຕົກລົງ ວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ ທີ່ຖືກຈັດຊັ້ນຂອງທະນາຄານ ສະບັບເລກທີ 898/ກຄທ, ລົງວັນທີ 14 ພະຈິກ 2018 ເຊິ່ງຄຳແນະນຳດັ່ງກ່າວໄດ້ອະທິບາຍແນະນຳວິທີການຫັກເງິນແຮຢ່າງລະອຽດຈະແຈ້ງແລ້ວ. ນອກນັ້ນ, ທຫລ ຍັງມີຄຳແນະນຳກ່ຽວກັບການບັນທຶກບັນຊີການຈັດຊັ້ນໜີ້ ແລະ ຫັກເງິນແຮ ສະບັບເລກທີ 334/ກບງ, ລົງວັນທີ 11 ມີນາ 2019 ເຊິ່ງໄດ້ແນະນຳລະອຽດຕໍ່ກັບຂັ້ນຕອນບັນທຶກບັນຊີຫັກເງິນແຮ ເຊິ່ງຜ່ານມາ ທຫລ ໄດ້ດຳເນີນການເຜີຍແຜ່ ນິຕິກຳດັ່ງກ່າວໃຫ້ແກ່ທະນາຄານທຸລະກິດແລ້ວ. ເຖິງຢ່າງໃດກໍ່ຕາມ, ຖ້າຫາກວ່າທະນາຄານທຸລະກິດໃດຍັງບໍ່ເຂົ້າໃຈລະອຽດ ກໍ່ສາມາດສະເໜີ ມາຍັງ ທຫລ ເພື່ອດຳເນີນການເຜີຍແຜ່ໃຫ້ຕື່ມ.

## V. ພາກສະຫລຸບ ແລະ ຄຳເຫັນຊີ້ນຳ

ໃນຕອນທ້າຍ, ທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ, ປະທານກອງປະຊຸມ ໄດ້ສັງລວມຄຳເຫັນຂອງກອງປະຊຸມ ແລະ ໃຫ້ທິດຊີ້ນຳ ດັ່ງນີ້:

1. ໄດ້ຕີລາຄາວ່າ ບັນດາຂະແໜງການພາກລັດ ແລະ ພາກທຸລະກິດ ໄດ້ພະຍາຍາມ ແລະ ສຸມສະຕິປັນຍາແກ້ໄຂບັນດາຂໍ້ສະເໜີ, ແຕ່ຍັງມີຫຼາຍຂໍ້ສະເໜີ ທີ່ຍັງບໍ່ທັນໄດ້ຮັບການແກ້ໄຂຕາມແຜນ

ແລະ ລະດັບຄາດໝາຍ ທີ່ໄດ້ຕົກລົງໄວ້. ທ່ານ ນາຍົກລັດຖະມົນຕີ ໄດ້ຊີ້ນຳໃຫ້ ພາກລັດ ແລະ ທຸລະກິດ ສືບຕໍ່ປຶກສາຫາລື ແລະ ແກ້ໄຂບັນດາຂໍ້ສະເໜີ ທີ່ຍັງຄົງຄ້າງ ຈາກກອງປະຊຸມທຸລະກິດລາວ ຄັ້ງທີ 14 ແລະ 15 ໂດຍນຳໃຊ້ ກົນໄກ, ຂັ້ນຕອນ ແລະ ຂະບວນການປຶກສາຫາລື ຕາມຂໍ້ຕົກລົງ ສະບັບເລກທີ 04/ນຍ, ລົງວັນທີ 08 ມັງກອນ, 2024 ແລະ ລາຍງານຄວາມຄືບໜ້າ ຕໍ່ຄະນະຊີ້ນຳ ແລະ ລັດຖະບານ ເປັນປະຈຳ;

2. ໄດ້ປະກາດການຮັບຮອງເອົາ ບັນດາຂໍ້ສະເໜີປັບປຸງສະພາບແວດລ້ອມການດຳເນີນທຸລະກິດທັງໝົດ 12 ຂໍ້ສະເໜີ ໃນ 07 ຂົງເຂດວຽກງານເປັນວຽກງານບູລິມະສິດ ສຳລັບ ປີ 2024 ແລະ ໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ອອກແຈ້ງການເຖິງບັນດາຂະແໜງການກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂ;
3. ໄດ້ເນັ້ນຄວາມສຳຄັນ ຂອງການປັບປຸງ ແລະ ແກ້ໄຂບັນຫາ ແລະ ສິ່ງກີດຂວາງ ທີ່ມີຕໍ່ການລົງທຶນ ແລະ ການດຳເນີນທຸລະກິດ, ພ້ອມທັງຮຽກຮ້ອງໃຫ້ທຸລະກິດພາຍໃນ ແລະ ຕ່າງປະເທດ ນຳໃຊ້ກົນໄກປຶກສາຫາລື ລະຫວ່າງ ພາກລັດ ແລະ ທຸລະກິດ ພາຍໃຕ້ກອງປະຊຸມທຸລະກິດລາວ ເພື່ອກຳນົດບັນຫາ ທີ່ເປັນບູລິມະສິດ, ຄົ້ນຄວ້າສາເຫດຂອງບັນຫາ ແລະ ຕົກລົງວິທີແກ້ໄຂຮ່ວມກັນກັບບັນດາຂະແໜງການພາກລັດ ທີ່ກ່ຽວຂ້ອງ ແລະ ຕິດຕາມປະສິດທິຜົນຂອງການຈັດຕັ້ງປະຕິບັດບັນດາມາດຕະການ ແລະ ລະບຽບການ ທີ່ວາງອອກແຕ່ລະໄລຍະ.

ກ່ອນປິດກອງປະຊຸມ, ທ່ານ ນາຍົກລັດຖະມົນຕີ ໄດ້ສະແດງຄວາມຂອບໃຈ ມາຍັງ ກຊ ອຄ, ສຄອຊ, ບັນດາຄູ່ຮ່ວມພັດທະນາ ແລະ ຜູ້ເຂົ້າຮ່ວມກອງປະຊຸມທັງໝົດ.

ກອງປະຊຸມ ໄດ້ປິດລົງໃນເວລາ 12.00 ໂມງ ຂອງວັນດຽວກັນ.

ດັ່ງນັ້ນ, ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ບັນທຶກໂດຍ**
**ກອງເລຂາກອງປະຊຸມທຸລະກິດລາວ**

**ຄະນະຊີ້ນຳກອງປະຊຸມທຸລະກິດລາວ**

**ກະຊວງອຸດສາຫະກຳ ແລະ ການຄ້າ**
**ລັດຖະມົນຕີ**

ມະໄລທອງ ກົມມະສິດ

**ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ**
**ປະທານ**

ອຸເດດ ສຸວັນນະວົງ